Washington State Department of Social & Health Services
Transforming lives

ເອໂປຣ **2021**

# ໂຄງການຊ່ວຍເຫລືອເງິນສົດຍາມພັຍພິບັດ

## ຄໍາຖາມທີ່ຖືກຖາມກັນຢູ່ເລື້ອຍໆ

### ໂຄງການຊ່ວຍເຫລືອເງິນສົດຍາມພັຍພິບັດແມ່ນຫຍັງ?

The Department of Social and Health Services ເຮັດໃຫ້ໂຄງການຊ່ວຍເຫລືອເງິນສົດຍາມພັຍພິບັດ,ຫລື DCAP, ເມື່ອເວລາຜູ້ປົກຄອງຣັດຖະແລງການສະ ພາບເຫດການສຸກເສີນບາງຢ່າງ.ໂຄງການມຸ່ງຫມາຍໃສ່ເພື່ອຈະຊ່ວຍຄົນຣັດວໍຊິງຕັນ ກຸ້ມຄວາມຕ້ອງການຈໍາເປັນຂອງເຂົາເຈົ້າໃນຣະຫວ່າງສະພາບເຫດການສຸກເສີນ.

### ເປັນຫຍັງສິ່ງນີ້ຈຶ່ງເກີດຂຶ້ນ?

ຣັດຖະບານກາງໄດ້ອະນຸມັດໃຫມ່ອີກເທື່ອ ນຶ່ງການວາງໃຊ້ໂຄງການ DCAP ຢູ່ໃນຣັດວໍຊິງຕັນ.ເລີ້ມຕົ້ນຕັ້ງແຕ່ເດືອນເອໂປຣ2021, DCAP ຈະຖືກເປີດຄືນໃນການຕອບສະນອງຕໍ່ເຫດການສຸກເສີນ COVID-19. DSHS Community Services Division ມີເງິນທຶນເພີ້ມເຕີມແລະຄໍາສັ່ງໃຫມ່ Governor Inslee ເພື່ອຈະບໍຣິຫານໂຄງການຊົ່ວຄາວອັນນີ້ເພື່ອຈະຊ່ວຍເຫລືອຄົນຣັດວໍຊິງຕັນຜ່ານຜ່າເວລາຫຍຸ້ງຍາກລໍາບາກທີ່ບໍ່ເຄີຍມີມາກ່ອນເທື່ອນີ້.

### ຂ້ອຍສາມາດໄດ້ຮັບຄວາມຊ່ວຍເຫລືອອັນນີ້ດົນປານໃດເທື່ອນຶ່ງ?

ໂດຍອີງຕາມຄໍາສັ່ງປັດຈຸບັນຈາກຜູ້ປົກຄອງຣັດ,ໂຄງການ DCAP ຈະຖືກເອື້ອເພື້ອໃຫ້ແຕ່ລະເດືອນ.ຄໍາຮ້ອງຂໍໃບໃຫມ່ແລະການສໍາພາດຕ້ອງໄດ້ເຮັດສໍາລັບການຮ້ອງຂໍແຕລະເທື່ອໃນຣະຫວ່າງເວລານີ້.

### ໂຄງການອັນນີ້ຈະມີໄວ້ໃຫ້ດົນປານໃດ?

ໂຄງການອັນນີ້ແມ່ນຊົ່ວຄາວແລະຈະຈົບລົງເມື່ອເວລາສະພາບເຫດການສຸກເສີນ,ຫລືເມື່ອເວລາເງິນທຶນທັງຫມົດໄດ້ຖືກຈ່າຍຫມົດແລ້ວ, ບໍ່ວ່າແນວໃດມາເຖິງກ່ອນ.

### ຂ້ອຍສາມາດໄດ້ຮັບເງິນສົດ DCAP ໄດ້ບໍ່ເຖິງແມ່ນວ່າຂ້ອຍບໍ່ມີລູກອາສັຍຢູ່ນໍາຂ້ອຍກໍຕາມ?

ແມ່ນ.

*(ຕໍ່ຢູ່ຫນ້າຕໍ່ໄປ)*



### ຂ້ອຍຈະຮ້ອງຂໍເອົາໄດ້ແນວໃດ?

ໂຄງການອັນນີ້ຕ້ອງການໃບຄໍາຮ້ອງຂໍແລະການສໍາພາດ.ຄອບຄົວສາມາດ:

- ຮ້ອງຂໍເອົາທາງອອນລາຍນ໌ໄດ້ທີ່ **WashingtonConnection.org** ແລະແລ້ວໂທຫາສູນກາງຕິດຕໍ່ປະຊາສັມພັນໄດ້ທີ່ 877-501-2233 ເພື່ອຈະເຮັດການສໍາພາດທີ່ຕ້ອງການໃຫ້ແລ້ວ.
- ໂທຫາ **877-501-2233** ຣະຫວ່າງ 8 a.m.–3 p.m. ວັນຈັນຮອດວັນສຸກເພື່ອຈະເຮັດການດໍາເນີນການໃນຄໍາຮ້ອງຂໍໃຫ້ແລ້ວ.
- ພວກເຮົາສາມາດພິຈາຣະນາເບິ່ງເງື່ອນໄຂຮັບເອົາຂອງທ່ານສໍາລັບໂຄງການທຸກໆຢ່າງຂອງພວກເຮົາໃນການສໍາພາດເທື່ອດຽວ.

Washington State
Department of Social & Health Services
*Transforming lives*

### ຂ້ອຍສາມາດໄດ້ຮັບ DCAP ແລະໂຄງການເງິນສົດອື່ນໆໃນເວລາດຽວກັນບໍ່?

ບໍ່ໄດ້. DCAP ແມ່ນສຳລັບຄອບຄົວທີ່ບໍ່ມີເງື່ອນໄຂໄດ້ຮັບໂຄງການເງິນສົດຂອງ DSHS ອື່ນໆ.

### ຂອບເຂດຣາຍໄດ້ສຳລັບໂຄງການອັນນີ້ແມ່ນເທົ່າໃດ?

ຂອບເຂດຂອງຍອດຣາຍໄດ້ (ຫລັງຈາກເງິນຫັກອອກ) ສຳລັບຣາຍໄດ້ທຸກໆຢ່າງທີ່ຖືກຄາດວ່າຈະໄດ້ຮັບໃນເດືອນຂອງໃບຄຳຮ້ອງໄດ້ຖືກອີງໃສ່ຂະນາດຂອງຄອບຄົວຂອງທ່ານ.ຈົ່ງເບິ່ງຕາຕະລາງຂ້າງລຸ່ມ:

| ຂະນາດຂອງຄອບຄົວ | ຂອບເຂດຣາຍໄດ້ຫລັງຈາກ ເງິນຫັກອອກ |
|---|---|
| 1 | $363 |
| 2 | $459 |
| 3 | $569 |
| 4 | $670 |
| 5 | $772 |
| 6 | $877 |
| 7 | $1,013 |
| 8+ | $1,121 |

### ມັນມີຂອບເຂດຂອງຊັບສິນສຳລັບໂຄງການອັນນີ້ບໍ່?

ໃນຣະຫວ່າງເຫດການສຸກເສີນປັດຈຸບັນ,ຊັບສິນທີ່ມີໄວ້ໃຫ້ຂອງທ່ານສູງຮອດ $6,000 ຈະຖືກຍົກເວັ້ນ.ເງິນມູນຄ່າມີຢູ່ຮອດ $10,000 ໃນຣົດຍົນຈະຖືກຍົກເວັ້ນອີກຄືກັນ.

### ຣາຍຣະອຽດແນວໃດແດ່ທີ່ຂ້ອຍຕ້ອງການສຳລັບການສຳພາດຂອງຂ້ອຍ?

ໃນຣະຫວ່າງການສຳພາດ,ພວກເຮົາຈະເວົ້າລົມກັນກ່ຽວກັບຣາຍໄດ້ທຸກໆຢ່າງທີ່ທ່ານຄາດວ່າຈະໄດ້ຮັບສຳລັບເດືອນນັ້ນ,ຊັບສິນແນວໃດແດ່ທີ່ທ່ານມີຢູ່,ເງິນຫັກອອກແນວໃດແດ່ທີ່ພວກເຮົາສາມາດຫັກອອກໄດ້ແລະຣາຍຈ່າຍແນວໃດແດ່ທີ່ທ່ານຕ້ອງການຄວາມຊ່ວຍເຫລືອນຳ.

### ຣາຍຈ່າຍແນວໃດແດ່ທີ່ຂ້ອຍສາມາດໄດ້ຮັບຄວາມຊ່ວຍເຫລືອນຳ?

DCAP ກວມເອົາຊະນິດຂອງຄວາມຕ້ອງການຕໍ່ລົງໄປນີ້:ຄ່າບ່ອນຢູ່ອາສັຍ, ຄ່ານ້ຳຄ່າໄຟ,ເຄື່ອງນຸ່ງ,ການປິ່ນປົວພະຍາບານເລັກນ້ອຍ,ເຄື່ອງໃຊ້ສອຍໃນຄອບຄົວແລະຄ່າຂົນສົ່ງໄປມາສຳລັບວຽກງານ. DCAP ຍັງສາມາດຊ່ວຍເຫລືອໄດ້ນຳອາຫານ,ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານທີ່ດຳເນີນຕໍ່ໄປເທົ່ານັ້ນ.

### ຈຳນວນຂອງການຊ່ວຍເຫລືອ DCAP ສູງສຸດແມ່ນເທົ່າໃດ?

ຈຳນວນຂອງການຊ່ວຍເຫລືອຈະຂຶ້ນນຳຂະນາດຂອງຄອບຄົວຂອງທ່ານ,ຣາຍໄດ້ແລະຄວາມຕ້ອງການ. ການຊ່ວຍເຫລືອສູງສຸດໄດ້ຖືກກ່າວຢູ່ຂ້າງລຸ່ມນີ້:

| ຂະນາດ ຂອງຄອບຄົວ | ຈຳນວນຂອງການ ຊ່ວຍເຫລືອ ສູງສຸດ |
|---|---|
| 1 | $363 |
| 2 | $459 |
| 3 | $569 |
| 4 | $670 |
| 5 | $772 |
| 6 | $877 |
| 7 | $1,013 |
| 8+ | $1,121 |

### ຂ້ອຍຕ້ອງເປັນຄົນສັນຊາດ U.S. ບໍ່? ຈະເຮັດແນວໃດຖ້າຫາກວ່າຂ້ອຍບໍ່ມີເລກຄວາມປອດພັຍຂອງສັງຄົມເດ?

ທ່ານບໍ່ຕ້ອງໄດ້ເປັນຄົນສັນຊາດ U.S. ຫລືມີສະພາບການເຂົ້າເມືອງບາງຢ່າງເພື່ອຈະໄດ້ຮັບ DCAP. ເງິນຈ່າຍຂອງ DCAP ທຸກໆຢ່າງຈະຖືກຍົກເວັ້ນຈາກການກວດເບິ່ງພາລະຂອງສາທາຣະນະຊົນ.ທ່ານຍັງບໍ່ຕ້ອງການທີ່ຈະເອົາເລກຄວາມປອດພັຍຂອງສັງຄົມໃຫ້ເພື່ອຈະໄດ້ຮັບເງິນ DCAP.

### ຣາຍຣະອຽດຂອງການເຂົ້າເມືອງຂອງຂ້ອຍຈະຖືກແລກປ່ຽນນຳເຈົ້າໜ້າທີ່ການເຂົ້າເມືອງຂອງຣັດຖະບານກາງ (ຜະແນກບໍຣິການສັນຊາດແລະການເຂົ້າເມືອງຂອງສະຫາຣັດອະເມຣິກາ) ບໍ່?

DSHS ຈະບໍ່ພິສູດຣາຍຣະອຽດຂອງການເຂົ້າເມືອງນຳ USCIS ສຳລັບຜູ້ທີ່ມີເງື່ອນໄຂໄດ້ຮັບ DCAP ເທົ່ານັ້ນ.ບຸກຄົນຫລືຄອບຄົວທີ່ມີເງື່ອນໄຂໄດ້ຮັບໂຄງການຊ່ວຍເຫລືອເງິນສົດຫລືອາຫານແນວອື່ນຈະມີສະພາບການເຂົ້າເມືອງຂອງເຂົາເຈົ້າຖືກພິສູດໂດຍ DSHS ໂດຍຜ່ານ <u>SAVE system</u> ພາຍໃຕ້ສັນຍານຳ USCIS.

### ຂ້ອຍຈະໄດ້ຮັບການຊ່ວຍເຫລືອໄດ້ແນວໃດ?

ຖ້າຫາກວ່າທ່ານຖືກອະນຸມັດໃຫ້ສຳລັບ DCAP, ການຊ່ວຍເຫລືອຂອງທ່ານຈະຖືກເບີກອອກໃຫ້ໃສ່ບັດໂອນການຊ່ວຍເຫລືອທາງອີເລັກໂທຣນິກ EBT. ຖ້າຫາກວ່າທ່ານບໍ່ມີບັດ,ພວກເຮົາຈະເອົາບັດໃບນຶ່ງໃຫ້ທ່ານ.ບັດໃບນຶ່ງຈະຖືກສົ່ງໄປໃຫທ່ານທາງໄປສະນີ,ນອກຈາກວ່າທ່ານມີທີ່ຢູ່ສົ່ງໃຫ້ທົ່ວໄປ.